# ສິດທິແລະຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມນຳ Senior Farmers Market Nutrition Program

ໂຄງການອາຫານການກິນຂອງຕະລາດສວນຜັກສຳລັບຜູ້ອາວຸໂສ (Senior Farmers Market Nutrition Program, SFMNP) ຈະເອົາໝາກໄມ້ແລະຜັກສົດໃຫ້ຜູ້ອາວຸໂສຜູ້ທີ່ມີຣາຍໄດ້ຕ່ຳດ້ວຍເປົ້າໝາຍຂອງການສົ່ງເສີມສຸຂະພາບແລະສະພາບອາຫານການກິນຂອງເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ.ມັນຍັງຈະອຸ້ມຊູການປູກຝັງທ້ອງຖິ່ນອີກຄືກັນໂດຍການເພີ້ມການໃຊ້ຕະລາດຊາວຟາມແລະຮ້ານຂາຍຕາມຂ້າງຖະໜົນຫລາຍຂຶ້ນ.ມັນໄດ້ຖືກອອກເງິນທຶນໃຫ້ໃນສ່ວນນຶ່ງໂດຍເງິນທຶນຣັດຖະບານກາງຂອງ USDA.

## <u>ສິດທິຂອງທ່ານ</u>

### ໃນຖານະເປັນຜູ້ຮ້ອງຂໍເອົາ/ຜູ້ເຂົ້າຮ່ວມຂອງ SFMNP ທ່ານມີສິດທິທີ່ຈະ:

- ຖືກເຣັດນຳດ້ວຍກຽດສັກສີ,ຄວາມນັບຖືແລະໂດຍປາສຈາກການແບ່ງແຍກຊົນຊັ້ນວັນນະ;
- ຖືກແຈ້ງບອກໂດຍທາງໜັງສືພາຍໃນ 15 ວັນຂອງໃບຄຳຮ້ອງຖ້າຫາກວ່າທ່ານຖືກພົບວ່າບໍ່ມີເງື່ອນໄຂໄດ້ຮັບ;
- ທີ່ຈະຂໍອຸທອນຄຳຕັດສິນວ່າບໍ່ມີເງື່ອນໄຂໄດ້ຮັບຖ້າຫາກວ່າທ່ານຮູ້ສຶກວ່າການຄົ້ນພົບໄດ້ຖືກເຣັດລົງໄປດ້ວຍຄວາມຜິດພາດ;
- ທີ່ຈະເກັບຮັກສາຣາຍຣະອຽດທີ່ທ່ານໄດ້ເອົາໃຫ້ໄວ້ເປັນຄວາມລັບນອກຈາກວ່າທ່ານຮ້ອງຂໍໃຫ້ມັນຖືກແລກປ່ຽນກັນ;
- ທີ່ຈະເຣັດຄຳຮ້ອງທຸກຖ້າຫາກວ່າທ່ານຮູ້ສຶກວ່າທ່ານບໍ່ຖືກເຣັດນຳຢ່າງຢຸຕິທັມ;
- ທີ່ຈະໄດ້ຮັບຄຳຊີ້ນຳອັນແຈ່ມແຈ້ງວ່າຈະໃຊ້ການຊ່ວຍເຫລືອທີ່ທ່ານໄດ້ຮັບນັ້ນໄດ້ແນວໃດແລະຢູ່ໃສ;
- ທີ່ຈະຮຽນຮູ້ກ່ຽວກັບການບໍຣິການແນວອື່ນທີ່ອາດຈະມີໄວ້ໃຫ້ແກ່ທ່ານ.ທ່ານຈະຕິດຕໍ່ຫາ Senior Information & Assistance ຖ້າຫາກວ່າທ່ານຢາກຈະຊອກຮູ້ກ່ຽວກັບການບໍຣິການແນວອື່ນສຳລັບຜູ້ອາວຸໂສຢູ່ໃນໂຂງເຂດຂອງທ່ານ.

## <u>ຄວາມຮັບຜິດຊອບຂອງທ່ານ</u>

### ໃນຖານະເປັນຜູ້ຮ້ອງຂໍເອົາ/ຜູ້ເຂົ້າຮ່ວມຂອງ SFMNP ທ່ານມີຄວາມຮັບຜິດຊອບທີ່ຈະ:

- ທີ່ຈະເອົາຣາຍຣະອຽດທີ່ຖືກຕ້ອງໃຫ້ໂດຍອີງຕາມຄວາມຮັບຮູ້ທີ່ດີທີ່ສຸດຂອງທ່ານເພື່ອຈະພິຈາຣະນາເບິ່ງເງື່ອນໄຂຮັບເອົາ;
- ທີ່ຈະເຂົ້າໃຈວ່າການເອົາຣາຍຣະອຽດທີ່ບໍ່ຖືກຕ້ອງໃຫ້ແລະ/ຫລືປິດບັງຊຸກເຊື່ອງຄວາມຈິງໂດຍເຈດຕະນາສາມາດເປັນຜົນເຖິງການຈ່າຍການຊ່ວຍເຫລືອຄືນຂອງທ່ານຫລືການຟ້ອງຮ້ອງທາງກົດໝາຍ;
- ທີ່ຈະເຂົ້າໃຈວ່າຄວາມພະຍາຍາມທີ່ຈະເອົາການຊ່ວຍເຫລືອຫລາຍກວ່າເທື່ອນຶ່ງຫລືຢູ່ຕາມບ່ອນແຈກຢາຍຫລາຍໆບ່ອນໃນຣະຫວ່າງຣະດູການຈະເປັນຜົນເຖິງການຕັດຈາກໂຄງການ;
- ທີ່ຈະບໍຣິໂພກຜະລິດຜົນສົດທີ່ໄດ້ມາຜ່ານໂຄງການອັນນີ້ໂດຍທ່ານເອງ;
- ທີ່ຈະປ້ອງກັນສະວັດດີການທີ່ທ່ານໄດ້ຮັບ.ກະຣຸນາລາຍງານຖ້າຫາກວ່າມັນຖືກເສັຽໄປຫລືຖືກຂະໂມຍໄປໃຫ້ຫ້ອງການບ່ອນທີ່ເບີກການຊ່ວຍເຫລືອຂອງທ່ານ;ບັດທີ່ເສັຽໄປຫລືຖືກຂະໂມຍໄປຈະຖືກເຣັດໃໝ່ແທນໄດ້ໂດຍຫ້ອງການທີ່ເຣັດອອກມາ;
- ທີ່ຈະແລກປ່ຽນເອົາສະວັດດີການຂອງທ່ານນຳຊາວສວນບ່ອນທີ່ຖືກອະນຸຍາດໃນຣະຫວ່າງເດືອນຈູນ 1 ແລະເດືອນອົກໂຕເບີ 31;
- ທີ່ຈະເຂົ້າໃຈວ່າເງິນທຶນແມ່ນຈຳກັດສຳລັບໂຄງການນີ້ແລະມັນຖືກໃຊ້ແບບໃຜມາກ່ອນ,ຖືກຮັບໃຊ້ກ່ອນຈົນກວ່າເງິນທຶນໝົດ.

ໂດຍການສອດຄ່ອງນຳກົດໝາຍສິດທິພົລເມືອງຂອງຣັດຖະບານກາງແລະກົດຣະບຽບແລະນະໂຍບາຍກ່ຽວກັບສິດທິພົລເມືອງຂອງກົມ U.S. Department of Agriculture (USDA), USDA, ອົງການຂອງເຂົາເຈົ້າ,ຫ້ອງການ,ແລະພະນັກງານ,ແລະສະຖາບັນທີ່ເຂົ້າຮ່ວມນຳແລະບໍຣິຫານໂຄງການຂອງ USDA ໄດ້ຖືກຫວງຫ້າມບໍ່ໃຫ້ມີການແບ່ງແຍກຊົນຊັ້ນວັນນະໂດຍອີງຕາມຜິວພັນ,ສີສັນ,ເຊື້ອຊາດດັ້ງເດີມ,ເພດ,ຄວາມເສັຽອົງຄະ,ອາຍຸ,ຫລືການຕອບໂຕ້ຫລືການແກ້ແຄ້ນຍ້ອນກິຈກັມການເຄື່ອນໄຫວທາງສິດທິພົລເມືອງໃນຜ່ານມາຢູ່ໃນໂຄງການຫລືກິຈກັມແນວໃດແນວນຶ່ງທີ່ຖືກດຳເນີນການຫລືອອກເງິນທຶນໃຫ້ໂດຍ USDA.

ບຸກຄົນທີ່ມີຄວາມເສັຽອົງຄະຜູ້ທີ່ຕ້ອງການແບບທາງອື່ນຂອງການຕິດຕໍ່ສື່ສານສຳລັບຣາຍຣະອຽດຂອງໂຄງການ (ເຊັ່ນວ່າ,ໜັງສືສຳລັບຄົນຕາບອດ,ຕົວພິມໃຫຍ່,ເທັບອັດສຽງ,ພາສາອະເມຣິກັນໃບ້,ອື່ນໆ) ,ຄວນຈະຕິດຕໍ່ຫາຫ້ອງການ (ຣັດຫລືທ້ອງຖິ່ນ) ບ່ອນທີ່ເຂົາເຈົ້າຮ້ອງຂໍເອົາການຊ່ວຍເຫລືອ.ບຸກຄົນຜູ້ທີ່ຫູໜວກ,ຍາກຕໍ່ການຟັງສຽງຫລືມີຄວາມເສັຽອົງຄະດ້ານການປາກເວົ້າຈະຕິດຕໍ່ຫາ USDA ໂດຍຜ່ານ Federal Relay Service ໄດ້ທີ່ (800) 877-8339. ນອກຈາກນັ້ນອີກ,ຣາຍຣະອຽດກ່ຽວກັບໂຄງການຈະມີໄວ້ໃຫ້ເປັນພາສາອື່ນນອກຈາກພາສາອັງກິດ.

ເພື່ອຈະຍື່ນຄຳຮ້ອງທຸກຂອງການແບ່ງແຍກຊົນຊັ້ນວັນນະກ່ຽວກັບໂຄງການ,ຂຽນປະກອບໃບຟອມ [USDA Program Discrimination Complaint Form](https://www.usda.gov/oascr/how-to-file-a-program-discrimination-complaint), (AD-3027) ຖືກພົບເຫັນທາງອອນລາຍນ໌ຢູ່ທີ່: https://www.usda.gov/oascr/how-to-file-a-program-discrimination-complaint, ແລະຢູ່ຕາມຫ້ອງການ USDA ທຸກໆບ່ອນ,ຫລືຂຽນໜັງສືຈ່າໜ້າຊອງເຖິງ USDA ແລະບອກຣາຍຣະອຽດທຸກໆຢ່າງທີ່ຕ້ອງມີໃສ່ໃນໃບຟອມ.ເພື່ອຈະຮ້ອງຂໍເອົາໂກປີ້ຂອງໃບຟອມຮ້ອງທຸກ,ໂທຫາ (866) 632-9992. ຍື່ນໃບຟອມຫລືໜັງສືທີ່ຖືກຂຽນປະກອບແລ້ວຂອງທ່ານໄປຫາ USDA ໂດຍທາງ:

(1) ໄປສະນີ: U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ແຟກຊ໌: (202) 690-7442;

(3) ອີເມລ໌: program.intake@usda.gov.

ສະຖາບັນແຫ່ງນີ້ເປັນຜູ້ບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.